# ທາງລົດໄຟລາວ-ຈີນ ໄດ້ເພີ່ມຂະບວນລົດໄຟໂດຍສານສາກົນ ໄປ-ກັບຄູ່ໜຶ່ງ ນັບແຕ່ວັນທີ 13 ເມສາ ເປັນຕົ້ນມາ

ເນື່ອງໃນໂອກາດເປີດນຳໃຊ້ຂະບວນລົດໄຟໂດຍສານສາກົນຕາມທາງລົດໄຟລາວ-ຈີນ ຄົບຮອບ 1 ປີ ເມື່ອວັນທີ 13 ເມສາຜ່ານມາ, ພາກສ່ວນທາງລົດໄຟທັງສອງປະເທດລາວ ແລະ ຈີນ ໄດ້ເພີ່ມຂະບວນລົດໄຟໂດຍສານສາກົນໄປ-ກັບຄູ່ໜຶ່ງລະຫວ່າງກິ່ງແຂວງສິບສອງພັນນາ ແຂວງຢຸນນານ ສປ ຈີນ ກັບ ນະຄອນ-ຫຼວງພະບາງ ແຂວງຫຼວງພະບາງ ສປປ ລາວ ເຊິ່ງເປັນສະຖານທີ່ທ່ອງທ່ຽວທີ່ມີຊື່ສຽງຂອງລາວ, ຜູ້ໂດຍສານສາມາດຂີ່ລົດໄຟໄປ-ກັບລະຫວ່າສອງຕົວເມືອງດັ່ງກ່າວພາຍໃນມື້ດຽວ.

ນັບແຕ່ການເປີດນຳໃຊ້ຂະບວນໂດຍສານລົດໄຟສາກົນຕາມທາງລົດໄຟລາວ-ຈີນ ເປັນຕົ້ນມາ, ຂີ່ລົດໄຟໄປທ່ຽວປະເທດລາວ ແລະ ແຂວງຢຸນນານ ສປ ຈີນ ໄດ້ຮັບຄວາມນິຍົມຊົມຊອບຈາກຄົນທັງຫຼາຍ. ຕໍ່ໄປຂໍເຊີນທ່ານຕິດຕາມບາດກ້າວຂອງນາງ ສຸລິດາ ພິທັກອນ ທີ່ມາຈາກປະເທດລາວຂອງສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ ຂີ່ຂະບວນລົດໄຟລາວ-ຈີນ ໄປຫຼິ້ນບຸນຫົດນ້ຳຢູ່ສິບສອງພັນນາ.



ສະແກນ QR Code ເບິ່ງວິດີໂອ

## ທາງລົດໄຟລາວ-ຈີນ ຂອງພວກເຮົາ

ນັບແຕ່ເປີດນຳໃຊ້ຂະບວນລົດໄຟໂດຍສານສາກົນຕາມທາງລົດໄຟລາວ-ຈີນ 1 ປີເປັນຕົ້ນມາ, ໄດ້ຊຸກຍູ້ການແລກປ່ຽນ ແລະ ການພັດທະນາໃນຫຼາຍດ້ານ ລະຫວ່າງ ສອງປະເທດລາວ-ຈີນ ເຊັ່ນ: ການທ່ອງທ່ຽວ, ການຄ້າ, ການສຶກສາ ເປັນຕົ້ນ, ເຊິ່ງໄດ້ພື່ມຄວາມມີຊີວິດຊີວາໃຫ້ແກ່ການພັດທະນາຂອງພາກພື້ນ. ຜູ້ໂດຍສານສາມາດຂີ່ລົດໄຟເດີນທາງຈາກສິບສອງພັນນາໄປຮອດຫຼວງພະບາງພາຍໃນມື້ດຽວ, ໄດ້ເພີ່ມຄວາມມີຊີວິດຊີວາໃໝ່ໃຫ້ແກ່ເສັ້ນທາງແຫ່ງມິດຕະພາບສາຍນີ້; ທາງລົດໄຟສາຍນີ້ ຈະສ້າງຄວາມຫວັງ ແລະ ຮັບພາລະໜ້າທີ່ຫຼາຍກວ່າເກົ່າ, ສ່ວນເລື່ອງລາວທີ່ເກີດຂຶ້ນຢູ່ຕາມ "ເສັ້ນທາງຂົນສົ່ງແຫ່ງຄຳ" ສາຍນີ້ ຍັງຈະສືບຕໍ່ສະແດງອອກຢ່າງຕໍ່ເນື່ອງ.

### 1 ນາງ ໄຕຣຸຍ (Dai Rui) ຫົວໜ້າຈຸພະນັກງານປະຈຳຂະບວນລົດໄຟ: "ການຂົນສົ່ງຜູ້ໂດຍສານຂ້າມຊາດໃນຍາມບຸນກຸດຈີນ" ຂອງຂ້າພະເຈົ້າ



ຂ້າພະເຈົ້າເປັນໜຶ່ງໃນພະນັກງານຂອງກຸ່ມບໍລິສັດທາງລົດໄຟແຫ່ງຊາດຈີນສາຂາຄຸນໝິງ ທີ່ປະຈຳການຢູ່ຕາມທາງລົດໄຟລາວ-ຈີນ, ປັດຈຸບັນນີ້ ເປັນຫົວໜ້າຄວບຜູ້ຊີ້ນຳການບໍລິຫານຂອງຂະບວນລົດໄຟໂດຍສານສາກົນຖ້ຽວ D88/87. ໃນຍາມບຸນກຸດຈີນປີນີ້, ຍັງມີພະນັກງານລົດໄຟຈີນເກືອບ 600 ຄົນໄດ້ປະຈຳການຢູ່ຕາມທາງລົດໄຟລາວ-ຈີນ ຄືກັນກັບຂ້າພະເຈົ້າ.

ປີນີ້ເປັນປີທີ 16 ທີ່ຂ້າພະເຈົ້າໄດ້ປະຈຳການໃນການຂົນສົ່ງຜູ້ໂດຍສານໃນຍາມບຸນກຸດຈີນ, ແຕ່ວ່າປີນີ້ມີຄວາມໝາຍພິເສດຫຼາຍສຳລັບຂ້າພະເຈົ້າ! ເພາະວ່າຂ້າພະເຈົ້າໄດ້ບັນລຸຄວາມຝັນຂອງຕົນ ທີ່ປະຈຳການຢູ່ຕາມຂະບວນລົດໄຟ "ການຂົນສົ່ງຜູ້ໂດຍສານຂ້າມຊາດໃນຍາມບຸນກຸດຈີນ".

ໃນເດືອນສິງຫາ 2021, ຂ້າພະເຈົ້າພ້ອມດ້ວຍເພື່ອນຮ່ວມງານ 300 ກວ່າຄົນ ໄດ້ຕັດສິນໃຈວ່າ ຈະເດີນທາງໄປປະເທດລາວ. ໃນຕອນເລີ່ມຕົ້ນ, ຂ້າພະເຈົ້າທີ່ຮັບຜິດຊອບການຝຶກອົບຮົມພະນັກງານຂົນສົ່ງຜູ້ໂດຍສານ ຕອນພາຍໃນປະເທດລາວນັ້ນ ບໍ່ພຽງແຕ່ຮ່ວມຊີວິດນຳນັກສຳມະນາກອນລາວຫຼາຍຮ້ອຍຄົນເທົ່ານັ້ນ, ຍັງຕ້ອງການພົວພັນກັບຜູ້ໂດຍສານຈຳນວນຫຼວງຫຼາຍ.

ໃນວັນທີ 3 ທັນວາ 2021, ທາງລົດໄຟລາວ-ຈີນ ໄດ້ເປີດນຳໃຊ້ຢ່າງເປັນທາງການ. ໃນມື້ນັ້ນ, ຂ້າພະເຈົ້າຮູ້ສຶກເປັນກຽດທີ່ສຸດໃນຊົ່ວຊີວິດຂອງຕົນພາຍໃຕ້ການເປັນສັກຂີພິຍານຂອງຜູ້ນຳສອງປະເທດລາວ-ຈີນ ໃນຖານະເປັນຫົວໜ້າຈຸພະນັກງານຂະບວນລົດໄຟ. ໃນວັນທີ 13 ເມສາ 2023, ຂະບວນລົດໄຟໂດຍສານສາກົນໄດ້ເປີດນຳໃຊ້ຢ່າງເປັນທາງການ, ຂ້າພະເຈົ້າໄດ້ເດີນທາງໄປ-ກັບລະຫວ່າງສອງປະເທດລາວ-ຈີນ ໂດຍເປັນຫົວໜ້າຈຸພະນັກງານ "ຂະບວນລ້ານຊ້າງ" ທີ່ເປັນຂະບວນລົດໄຟໂດຍສານຖ້ຽວທຳອິດຕາມທາງລົດໄຟລາວ-ຈີນ. ເພື່ອບໍລິການຜູ້ໂດຍສານສາກົນໄດ້ດີກວ່າເກົ່າ, ຂ້າພະເຈົ້າພ້ອມກັບເພື່ອນຮ່ວມງານໄດ້ປັບປຸງວຽກງານຕ່າງໆໃຫ້ດີຂຶ້ນ ເພື່ອສອດຄ່ອງກັບຮີດຄອງປະເພນີຂອງລາວ ແລະ ຄວາມຕ້ອງການຂອງຜູ້ໂດຍສານທີ່ມາຈາກຕ່າງປະເທດ, ເຊັ່ນ: ປັບປຸງທາງເຂົ້າ-ອອກ ສະຖານີຂອງຜູ້ໂດຍສານໃຫ້ດີຂຶ້ນ, ປັບປຸງປ້າຍນຳທາງຕ່າງໆໃນສະຖານີໃຫ້ສົມບູນຂຶ້ນຕື່ມ, ຕິດຕັ້ງປ້າຍນຳທາງທີ່ມີພາສາຈີນ, ພາສາລາວ ແລະ ພາສາອັງກິດຢູ່ຫ້ອງຂາຍປີ້, ທາງເຂົ້າບ່ອນກວດປີ້ ແລະ ຫ້ອງລໍຖ້າລົດ, ແຈ້ງການຂໍ້ກຳນົດສຳລັບຜູ້ໂດຍສານສາກົນກ່ຽວກັບການຂີ່ລົດ ແລະ ການເດີນທາງດ້ວຍຄວາມປອດໄພ ແລະ ຊ່ວຍຜູ້ໂດຍສານສາກົນໃນດ້ານການເຂົ້າ-ອອກເມືອງເປັນຕົ້ນ.

ເຖິງແມ່ນວ່າປະເທດລາວບໍ່ໄດ້ກຳນົດໃຫ້ມີການຂົນສົ່ງຜູ້ໂດຍສານໃນຍາມບຸນກຸດຈີນກໍຕາມ, ແຕ່ຜູ້ໂດຍສານກໍໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ພາຍຫຼັງຈີນເລີ່ມຕົ້ນຂົນສົ່ງຜູ້ໂດຍສານໃນຍາມບຸນກຸດຈີນ, ໂດຍສະເພາະແມ່ນໄດ້ເກີດມີປະກົດການຊື້ປີ້ຍາກໃນຍາມບຸນກຸດຈີນ. ຍ້ອນແນວນີ້, ນັບແຕ່ມື້ທຳອິດຂອງການຂົນສົ່ງຜູ້ໂດຍສານໃນຍາມບຸນກຸດຈີນ ກໍຄືວັນທີ 26 ມັງກອນ 2024 ເປັນຕົ້ນມາ, ບ່ອນນັ່ງຂອງຂະບວນລົດໄຟໂດຍສານສາກົນຕາມທາງລົດໄຟລາວ-ຈີນ ໄດ້ເພີ່ມຈາກ 300 ບ່ອນມາເປັນ 350 ບ່ອນ. ພ້ອມດຽວກັນນັ້ນ, ຍັງໄດ້ເພີ່ມທະວີການປະສານສົມທົບກັບອົງການຈັດຕັ້ງທາງລົດໄຟທັງພາຍໃນ ແລະ ຕ່າງປະເທດ, ມີການວາງແຜນລ່ວງໜ້າ ແລະ ໄດ້ປະຕິບັດມາດຕະການຫຼາຍຢ່າງ, ປັບປຸງມາດຕະການດ້ານການບໍລິການໃຫ້ສົມບູນຢ່າງທັນການ, ວິໄຈກົດເກນການປ່ຽນແປງຂອງກະແສຜູ້ໂດຍສານຢ່າງຖືກຕ້ອງແມ່ນຍຳ ແລະ ເພີ່ມຄວາມສາມາດ ໃນການຂົນສົ່ງໃຫ້ຫຼາຍກວ່າເກົ່າ. ສຳລັບຜູ້ໂດຍສານພິເສດ, ເຊັ່ນ: ຜູ້ເຖົ້າ, ເດັກນ້ອຍ, ຜູ້ເປັນພະຍາດ, ຄົນພິການ, ຜູ້ຖືພາເປັນຕົ້ນ, ໄດ້ສະເໜີໃຫ້ມີການບໍລິການພິເສດ, ເພື່ອຮັບປະກັນການຂົນສົ່ງຜູ້ໂດຍສານໃນຍາມບຸນກຸດຈີນ 2024 ດຳເນີນໄປຢ່າງເປັນລະບຽບຮຽບຮ້ອຍ, ໝັ້ນຄົງ ແລະ ປອດໄພ.

ຂ່າວ: Yang Yongquan



### 2 ນາງ ຈາງສຽວຢຽນ (Zhang Xiaoyan) ຜູ້ຕາງໜ້າ ສູນທ່ອງທ່ຽວວັດທະນະທຳລາວ ກ່າວ ເຊີນຊວນ ແລະ ຍິນດີຕ້ອນຮັບທ່ານມາທ່ຽວຊົມປະເທດລາວທີ່ສວຍສົດງົດງາມ

ລາຍການ "ອູຮາ" (WU HA) ເປັນລາຍການທ່ອງທ່ຽວຂະໜາດໃຫຍ່ ທີ່ໄດ້ຮັບຄວາມນິຍົມຊົມຊອບຫຼາຍຢູ່ຈີນ, ໃນລາຍການພາກທີ 4, ເຂົາເຈົ້າໄດ້ເດີນທາງມາເຖິງປະເທດລາວທີ່ຈຸດໝາຍປາຍທາງແຫ່ງໜຶ່ງທີ່ມີທິວທັດທຳມະຊາດທີ່ສວຍສົດງົດງາມ ແລະ ມີວັດທະນະທຳທີ່ຫຼາກຫຼາຍສີສັນ. ທີມງານຖ່າຍທຳໄດ້ຮູ້ສຶກມີຄວາມສົດຊື່ນ ແລະ ໄດ້ພົບເລື່ອງແປກໆມ່ວນໆຫຼາຍເລື່ອງ ໃນເວລາຖ່າຍທຳລາຍການຢູ່ລາວ, ຍັງໄດ້ເປັນສັກຂີພິຍານໃຫ້ເຫັນຄວາມສຸກ ແລະ ໂອກາດທີ່ນຳມາຈາກການຮ່ວມສ້າງ "ໜຶ່ງແລວ ໜຶ່ງເສັ້ນທາງ".

ການໄປຖ່າຍທຳລາຍການຢູ່ລາວເທື່ອນີ້ ເປັນໜຶ່ງໃນຜົນງານຂອງສູນທ່ອງທ່ຽວວັດທະນະທຳ ລາວ ເພື່ອໂຄສະນາຊັບພະຍາກອນການທ່ອງທ່ຽວຂອງປະເທດລາວເຂົ້າສູ່ປະເທດຈີນ, ພວກເຮົາໄດ້ອຳນວຍຄວາມສະດວກຈົນສຸດຄວາມສາມາດຂອງຕົນໃຫ້ແກ່ທີມງານຖ່າຍທຳລາຍການ ແລະ ແຂກທີ່ມາຮ່ວມລາຍການ ຫຼາຍດ້ານ, ເຊັ່ນ: ຂໍໃບອະນຸຍາດການຖ່າຍທຳ, ການເຊື່ອຖືທາງວັດທະນະທຳ, ການແປພາສາ, ການເດີນທາງ ແລະ ການປະສານງານສະຖານທີ່ ເປັນຕົ້ນ, ພ້ອມດຽວກັນນັ້ນ, ໃນໄລຍະທີ່ທີມງານໄປທັດສະນະສຶກສາ ສະຖານທີ່ຖ່າຍທຳ ໃນໄລຍະຕົ້ນ, ພວກເຮົາໄດ້ສະເໜີລາຍການຕ່າງໆທີ່ມີເອກະລັກພິເສດຂອງປະເທດລາວໃນດ້ານອາຫານການກິນ, ທີ່ພັກເຊົາ, ການເດີນທາງ, ການທ່ອງທ່ຽວ, ການຊື້ສິນຄ້າ ແລະ ການບັນເທີງໃຫ້ແກ່ທີມງານ ເຊິ່ງໄດ້ເພີ່ມເນື້ອໃນຫຼາຍຢ່າງໃຫ້ແກ່ການຖ່າຍທຳລາຍການ, ບໍ່ພຽງແຕ່ເຮັດໃຫ້ບັນດາແຂກທີ່ເຂົ້າຮ່ວມລາຍການສາມາດສຳຜັດກັບຮີດຄອງປະເພນີຕ່າງໆຂອງປະເທດລາວເທົ່ານັ້ນ, ຍັງເຮັດໃຫ້ຜູ້ຊົມປຽບເໝືອນໄດ້ມາທ່ຽວປະເທດລາວດ້ວຍຕົນເອງ ຜ່ານການຊົມລາຍການ ດັ່ງກ່າວນີ້.

ແຂກທີ່ເຂົ້າຮ່ວມລາຍການໄດ້ເຕົ້າໂຮມຢູ່ສະຖານີລົດໄຟບໍ່ຫານຂອງແຂວງຢຸນນານ ຈີນ, ພາຍຫຼັງມາໄດ້ແຈ້ງອອກເມືອງ, ຂີ່ຂະບວນລົດໄຟໂດຍສານສາກົນຕາມທາງລົດໄຟລາວ-ຈີນ ເດີນທາງອອກຈາກປະເທດຈີນຢ່າງສະດວກສະບາຍ, ແລ້ວເດີນທາງໄປຮອດນະຄອນ-ຫຼວງພະບາງທີ່ເປັນເມືອງມໍລະດົກໂລກ. ແຂກທີ່ເຂົ້າຮ່ວມລາຍການໄດ້ຂີ່ລົດຕຸກໆໄປທ່ຽວຫຼິ້ນ, ໄດ້ໄປຍ່າງເລາະຕະຫຼາດກາງຄືນຫຼວງພະບາງ, ຍັງໄດ້ໄປຂີ່ເຮືອຢູ່ຕາມແມ່ນ້ຳຂອງ, ໄປໂດດນ້ຳຢູ່ວັງວຽງ, ໄປເຕະກະຕໍ້ ແລະ ເຂົ້າຮ່ວມລາຍການອື່ນໆທີ່ມີເອກະລັກພິເສດຂອງປະເທດລາວ.

ໃນເວລາເດີນທາງ, ຍັງໄດ້ພົບຫຼາຍເລື່ອງທີ່ລືມຍາກ, ເຊັ່ນ: ບັນດາແຂກໄດ້ເຕັ້ນ "ວິຊາສາມ" ທີ່ເປັນລາຍການເຕັ້ນຕະຫຼົກ ທີ່ໄດ້ຮັບຄວາມນິຍົມຊົມຊອບທີ່ສຸດຢູ່ຕາມທາງອິນເຕີເນັດຢູ່ຕາມເຮືອສຳລານແມ່ນ້ຳຂອງ, ນອກຈາກນີ້, ພວກເຂົາຍັງໄດ້ສອນບັນດານັກຮຽນຂອງໂຮງຮຽນພາສາຈີນທ້ອງຖິ່ນຮ້ອງເພງ "ອະນາຄົດດີງາມກວ່າເກົ່າ" ແລະ ເພງອື່ນໆ ເຊິ່ງເຮັດໃຫ້ຄົນທັງຫຼາຍຮູ້ສຶກຊາບຊຶ້ງໃຈຫຼາຍ. ໃນການແຂ່ງໂດດນ້ຳທີ່ໜອງບລູລາກູນທີ່ວັງວຽງ, ແຂກທີ່ຮ່ວມລາຍການໄດ້ຊອກຫາ ຫຼື ຈັບຄູ່ "ຄູ່ຮ່ວມກະໂດດນ້ຳ" ຢູ່ກັບບ່ອນນັ້ນ ກໍມີຫຼາຍຄົນຍາດກັນເຂົ້າຮ່ວມ ເຊິ່ງມີບັນຍາກາດຄຶກຄື້ນມ່ວນຊື່ນທີ່ສຸດ.

ປີ 2024 ບໍ່ພຽງແຕ່ເປັນປີທ່ອງທ່ຽວລາວ ເທົ່ານັ້ນ, ຍັງເປັນປີແລກປ່ຽນວັດທະນະທຳຈີນ-ອາຊຽນ; ເຊື່ອໝັ້ນວ່າ: ພາຍຫຼັງ ລາຍການບັນເທີງ "ອູຮາ" ໄດ້ອອກອາກາດໄປແລ້ວ, ເສັ້ນທາງການທ່ອງທ່ຽວ ແລະ ລາຍການທ່ອງທ່ຽວທີ່ມີເອກະລັກພິເສດ ທີ່ບັນດາແຂກເຄີຍເຂົ້າຮ່ວມນັ້ນ ຈະກາຍເປັນຫົວຂໍ້ຈຸດສຸມ ຫຼື ຫົວຂໍ້ທີ່ສາມາດດຶງດູດຜູ້ຊົມໃນປະເທດຈີນ, ເຊິ່ງຈະເຮັດໃຫ້ນັກທ່ອງທ່ຽວຈີນໄປທ່ຽວລາວເພີ່ມຂຶ້ນຢ່າງຫຼວງຫຼາຍ.

ຮຽບຮຽງໂດຍ: Huang Yixian, Yang Chunmei

ສະໜອງຮູບພາບໂດຍ: ກຸ່ມບໍລິສັດທາງລົດໄຟແຫ່ງຊາດຈີນສາຂາຄຸນໝິງ, ຂ່າວສານຊິນຮວາ, ໜັງສືພິມລາຍວັນຢຸນນານ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້–ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com